# ເຮົາຈະເຮັດແນວໃດ
# ເມື່ອເຮົາເຮັດບາບ



4


“ເຈົ້າເຄີຍເຮັດບາບບໍ?”
“ເຄີຍ! ເຄີຍເຮັດແທ້.”
“ໃນເມື່ອເຈົ້າເຮັດບາບແລ້ວ ເຈົ້າເຮັດຫຍັງຕໍ່?”
“ຂ້ອຍຮູ້ສຶກເສຍໃຈ ແຕ່ກໍ່ບໍ່ໄດ້ເຮັດຫຍັງ ພຽງແຕ່ຢາກຢູ່ຄົນດຽວ.”


"ໂອ້! ຂ້ອຍຈະເລົ່າເລື່ອງໜຶ່ງໃຫ້ເຈົ້າຟັງ."
"ຕົກລົງເປັນເລື່ອງຫຍັງ?"
"ເປັນເລື່ອງກ່ຽວກັບເດັກຊາຍຄົນໜຶ່ງ ທີ່ລາວຮູ້ສຶກເສຍໃຈຫຼາຍ ເມື່ອລາວໄດ້ເຮັດບາບ."
ອຸດົມ ເປັນເດັກເກັບຂອງເສດ.
ມີມື້ໜຶ່ງ ທີ່ລາວກຳລັງເກັບຂອງ ເສດຢູ່ນັ້ນ ລາວໄດ້ເຫັນກະເປົ໋າ ເງິນຂອງຜູ້ຍິງຄົນໜຶ່ງເຮ່ຍ.
M. CH. SOKHA


ອຸດົມ ໄດ້ຈັບກະເປົ໋າຂຶ້ນມາແລະຊ່ອນ
ໄວ້ໃນເປົ໋າທີ່ລາວໃສ່ຂອງເສດ.
ແລະ ກໍໄດ້ເອົາໄປເຮືອນ.
ມື້ຕໍ່ມາ ລາວຮູ້ສຶກເສຍໃຈ ເພາະສິ່ງທີ່ລາວເຮັດນັ້ນເປັນຄວາມບາບ.
M. CH. SOKHA


ເມື່ອລາວກຳລັງນັ່ງຄິດຢູ່ນັ້ນ ໄດ້ມີລຸງຄົນໜຶ່ງຍ່າງເຂົ້າມາ ລຸງຄົນນັ້ນເປັນຄົນທີ່ຮັກ ແລະນັບຖືຜູ້ສ້າງຜູ້ແຕ່ງ. ລາວໄດ້ເຫັນ ອຸດົມ ກຳລັງນັ່ງໂສກເສົ້າຢູ່.
"ໂອ້! ຫຼານເປັນຫຍັງ? ເປັນຫຍັງຫຼານຄືມີສີໜ້າ ໂສກເສົ້າແທ້?"
ອຸດົມ ໄດ້ເລົ່າເລື່ອງທັງໝົດ ໃຫ້ລຸງຟັງ
M. CH. SOKHA


“ມະນຸດເຮົາທຸກຄົນເຮັດບາບ
ບໍ່ມີໃຜຈັກຄົນເລີຍ
ທີ່ບໍ່ເຄີຍເຮັດບາບ
ລວມທັງຫຼານ ແລະລຸງເອງ.”
“ຫຼານເອີຍ! ມະນຸດເຮົາທຸກຄົນມີບັນຫາ
ໃຫຍ່ທີ່ພວກເຮົາແກ້ໄຂບໍ່ໄດ້ ຄືຄວາມຊົ່ວ
ຄວາມບາບຂອງເຮົາ. ບໍ່ມີທາງໃດເລີຍທີ່
ພວກເຮົາຊິຊໍາລະລ້າງຄວາມຊົ່ວຂອງເຮົາ.
ພວກເຮົາຢາກເຮັດຄວາມດີ
ແຕ່ເຮັດຄວາມດີສະເໝີບໍ່ເປັນດອກ.”
n.CH. SOKHA


"ມີແຕ່ ພຣະເຈົ້າ ຜູ້ສ້າງຜູ້ແຕ່ງ ທີ່ມີອຳນາດ
ສາມາດໃຫ້ອະໄພຄວາມຊົ່ວຂອງພວກເຮົາໄດ້.
ພວກເຮົາຈຶ່ງຄວນສາລະພາບບາບຕໍ່ພຣະອົງ.
ແລ້ວ ອຸດົມ ກໍໄດ້ອະທິຖານ...
"ຂ້າແດ່ ພຣະເຈົ້າ
ໂຜດເມດຕາຂ້າພຣະອົງ
ຜູ້ເປັນຄົນບາບແດ່ທ້ອນ!"
ເມື່ອ ອຸດົມ ກຳລັງຍ່າງກັບເຮືອນ
ເຫດການດັ່ງກ່າວນັ້ນ
ໄດ້ເກີດຂຶ້ນອີກ!
M.CH.SOKHA


ແຕ່ເທື່ອນີ້ ອຸດົມ ມີໃຈໃໝ່ ແລ້ວລາວໄດ້ເອົາກະເປົ໋ານັ້ນໄປຄືນເຈົ້າຂອງ.


ພຣະເຈົ້າຜູ້ສ້າງຜູ້ແຕ່ງ ມີອຳນາດ
ແລະຢາກຈະຍົກໂທດໃຫ້ພວກເຮົາ
ຖ້າພວກເຮົາສາລະພາບບາບຕໍ່ພຣະເຈົ້າ.
"ຄິດເບິ່ງແມ່! ຄວາມຮັກ ແລະຄວາມເມດຕາ
ຂອງ ພຣະເຈົ້າ ກໍມີຢ່າງລົ້ນເຫຼືອ!
ເມື່ອຜູ້ໃດຜູ້ໜຶ່ງ ຮ່ວມເຂົ້າກັນກັບ ພຣະເຢຊູ
ຜູ້ນັ້ນກໍ່ເປັນ ຄົນທີ່ຖືກສ້າງຂຶ້ນໃໝ່;
ສິ່ງເກົ່າກໍສິ້ນສຸດໄປ ມີແຕ່ສິ່ງໃໝ່ໆທັງນັ້ນ."
M. CH. SOKHA


ຄຳຖາມສົນທະນາ
1. ບາບແມ່ນຫຍັງ?
2. ເມື່ອເຈົ້າເຮັດບາບເຈົ້າຄຶດຢ້ານບໍ?
ເຈົ້າຄຶດເສຍໃຈບໍ? ຍ້ອນຫຍັງ?
3.ຖ້າເຈົ້າເຮັດບາບ ມີວິທີໃດທີ່ຈະຮັບ
ອະໄພບາບໄດ້ບໍ?
4. ເວລາເຈົ້າເຮັດຜິດເຈົ້າເຄີຍ
ສາລະພາບ ຕໍ່ຜູ້ອື່ນບໍ?


ກິດຈະກຳ
ມີໃຜທີ່ເຈົ້າຄວນຈະໄປຂໍໂທດບໍ?
ຢ່າລໍຖ້າໂອກາດ, ຮີບໄປຂໍໂທດດຽວນີ້ເລີຍ.



ພຣະອົງ ເປັນຄວາມສະຫວ່າງ,
ຢູ່ໃນພຣະອົງບໍ່ມີຄວາມມືດຈັກດີ້.
ຖ້າພວກເຮົາບອກວ່າພວກເຮົາຮ່ວມ
ສາມັກຄີທຳກັບພຣະອົງ ແຕ່ຍັງດຳເນີນ
ຊີວິດຢູ່ໃນຄວາມມືດ, ພວກເຮົາກໍຕົວະ
ທັງຄຳເວົ້າ ແລະການກະທຳພ້ອມໆກັນ.
ແຕ່ຖ້າພວກເຮົາດຳເນີນຊີວິດຢູ່ໃນຄວາມສະຫວ່າງ
ດັ່ງພຣະອົງເອງຢູ່ໃນຄວາມສະຫວ່າງ,
ພວກເຮົາກໍຮ່ວມສາມັກຄີທຳເຊິ່ງກັນແລະກັນ
ແລະເລືອດຂອງ ພຣະເຢຊູ ພຣະບຸດຂອງ ພຣະເຈົ້າ
ກໍຊຳລະເຮົາທັງຫຼາຍຈາກການບາບທັງສິ້ນ.
ຖ້າພວກເຮົາເວົ້າວ່າ ພວກເຮົາບໍ່ມີບາບ
ພວກເຮົາກໍຫຼອກລວງຕົນເອງ
ແລະພວກເຮົາກໍບໍ່ມີຄວາມຈິງໃນຈິດໃຈ.
ແຕ່ຖ້າພວກເຮົາສາລະພາບການບາບ
ຂອງພວກເຮົາຕໍ່ ພຣະເຈົ້າ ພຣະອົງ ຈະຮັກສາຄຳສັນຍາຂອງພຣະອົງ
ແລະເຮັດໃນສິ່ງທີ່ຖືກຕ້ອງຄື:
ອະໄພການບາບຂອງພວກເຮົາ ແລະ
ຊຳລະພວກເຮົາຈາກການກະທຳຊົ່ວທັງສິ້ນ.
1 ໂຢຮັນ 1:5-9



© Alongsiders International
www.alongsiders.org
Email: info@alongsiders.org